ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະ ການລົງທຶນ

ເລກທີ: 3545 /ກຜທ
ນະຄອນຫຼວງວຽງຈັນ, ວັນທີ: 25 ທັນວາ 2023

# ຄໍາແນະນໍາ
## ກ່ຽວກັບການສ້າງແຜນພັດທະນາເສດຖະກິດ-ສັງຄົມ
## ໄລຍະ 5 ປີຕໍ່ໜ້າ ສໍາລັບຂະແໜງການ, ອົງການ, ຂັ້ນແຂວງ, ນະຄອນຫຼວງວຽງຈັນ, ນະຄອນ ແລະ ຂັ້ນເມືອງ

- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງແຜນການ ແລະ ການລົງທຶນ, ສະບັບເລກທີ 636/ນຍ, ລົງວັນທີ 26 ພະຈິກ 2021;
- ອີງຕາມ ຂໍ້ຕົກລົງ ຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການສະຫຼຸບກາງສະໄໝ, ສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແລະ ສ້າງແຜນການ 5 ປີ ຄັ້ງທີ X (2026-2030) ສະບັບເລກທີ 56/ນຍ, ລົງວັນທີ 24 ເມສາ 2023;
- ອີງຕາມ ຜົນການສະຫຼຸບຕີລາຄາການຈັດຕັ້ງປະຕິບັດກາງສະໄໝແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025).

**ລັດຖະມົນຕີ, ກະຊວງແຜນການ ແລະ ການລົງທຶນ ອອກຄໍາແນະນໍາ ດັ່ງນີ້:**

## I. ຈຸດປະສົງ ແລະ ຄວາມໝາຍສໍາຄັນ:

**1.1** ຈຸດປະສົງ.

1) ເພື່ອສ້າງຄວາມເປັນເອກະພາບທາງດ້ານທິດທາງ, ເປົ້າໝາຍ, ຄາດໝາຍ ແລະ ວຽກງານບູລິມະສິດຕົ້ນຕໍ, ເຊິ່ງເປັນບ່ອນອີງ ໃຫ້ແກ່ການສ້າງແຜນພັດທະນາເສດຖະກິດ-ສັງຄົມ ໃນ 5 ປີຕໍ່ໜ້າ ຂອງຂະແໜງການ, ອົງການ, ແຂວງ, ນະຄອນຫຼວງ, ນະຄອນ ແລະ ເມືອງ ໃຫ້ມີຄວາມຖືກຕ້ອງ, ຊັດເຈນ ແລະ ສອດຄ່ອງກັບສະພາບຕົວຈິງ.

2) ເພື່ອຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ສະໄໝທີ ..... ຂອງອົງຄະນະພັກ......, ບົນພື້ນຖານສືບຕໍ່ພັດທະນາປະເທດໃຫ້ບັນລຸເງື່ອນໄຂການຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ ໃນປີ 2026, ວິໄສທັດ ຮອດປີ 2030, ເປົ້າໝາຍການເຕີບໂຕສີຂຽວ ແລະ ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ໃນປີ 2030. ບົນພື້ນຖານດັ່ງກ່າວ ບັນດາຂະແໜງການ ແລະ ທ້ອງຖິ່ນ ຕ້ອງໄດ້ສືບຕໍ່ບຸກທະລຸຢ່າງແຂງແຮງກວ່າເກົ່າ ໃນການຊຸກຍູ້ກໍາລັງແຮງຂອງທຸກພາກສ່ວນເສດຖະກິດຕິດພັນກັບຂຸດຄົ້ນທ່າແຮງບົ່ມຊ້ອນຂອງຊາດ ແລະ ຂອງແຕ່ລະທ້ອງຖິ່ນ ໃຫ້ກາຍເປັນຖານການຜະລິດທີ່ເຂັ້ມແຂງ ແລະ ສາມາດສ້າງລາຍຮັບແຫ່ງຊາດທີ່ໝັ້ນຄົງ ຕາມທິດ "ຄຸນນະພາບ, ສີຂຽວ ແລະ ຍືນຍົງ".

**1.2** ຄວາມໝາຍສໍາຄັນ.

ການສະຫຼຸບຕີລາຄາແຜນພັດທະນາເສດຖະກິດ-ສັງຄົມ 5 ປີຜ່ານມາ ແລະ ການວາງແຜນພັດທະນາເສດຖະກິດ-ສັງຄົມ 5 ປີຕໍ່ໄປ ຂອງຂະແໜງການ, ອົງການ ແລະ ທ້ອງຖິ່ນ ແມ່ນມີຄວາມສໍາຄັນຫຼາຍ, ເພາະການສະຫຼຸບຕີລາຄາ ໃນ 5 ປີຜ່ານມາ ແລະ ການວາງທິດທາງຄາດໝາຍ ໃນ 5 ປີຕໍ່ໜ້າ ແມ່ນມີສາຍພົວພັນເຊິ່ງກັນ ແລະ ກັນ ບໍ່ສາມາດຕັດແຍກອອກຈາກກັນໄດ້. ການສະຫຼຸບຕີລາຄາຈະສ່ອງແສງໃຫ້ເຫັນເຖິງສະພາບການຈັດຕັ້ງປະຕິບັດຜ່ານມາທັງດ້ານດີ, ຜົນງານ, ຈຸດອ່ອນ, ຂໍ້ຄົງຄ້າງ, ສາເຫດຕ່າງໆ ແລະ ບົດຮຽນຖອດຖອນໄດ້, ຊຶ່ງເປັນຂໍ້ມູນຂ່າວສານທີ່ສໍາຄັນໃຫ້ແກ່ການຄົ້ນຄ້ວາ, ກໍານົດທິດທາງ, ຄາດໝາຍ ແລະ ມາດຕະການຕ່າງໆໃນຕໍ່ໜ້າ. ພ້ອມດຽວກັນນັ້ນ ແຜນ 5 ປີ ສະໄໝຕໍ່ໄປ ຕ້ອງບົນພື້ນຖານເນື້ອໃນຈິດໃຈຊີ້ນໍາມະຕິກອງປະຊຸມໃຫຍ່ ຄັ້ງ........ ຂອງອົງຄະນະພັກຂັ້ນຕົນ ເຊິ່ງໃນນັ້ນແມ່ນການຄາດຄະເນກາລະໂອກາດທີ່

ທ້າທາຍຈາກສະພາບການຂອງພາຍນອກ, ພາຍໃນ ລວມທັງສະພາບການຂອງຂະແໜງການ, ອົງການ ແລະ ທ້ອງຖິ່ນຕົນ ແມ່ນສຳຄັນຫຼາຍ ທັງຄາດຄະເນຄວາມອາດສາມາດບົ່ມຊ້ອນທາງດ້ານຊັບພະຍາກອນທຳມະຊາດ, ຊັບພະຍາກອນມະນຸດ, ກຳລັງທຶນຈາກແຫຼ່ງຕ່າງໆ ເພື່ອກຳນົດໃຫ້ຖືກຕ້ອງ ແລະ ສອດຄ່ອງ.

ຍ້ອນແນວນັ້ນ, ການເກັບຂໍ້ມູນສະຖິຕິກໍຄືຂໍ້ມູນຂ່າວສານ, ການວິເຄາະວິໄຈ ແມ່ນວຽກງານໜຶ່ງທີ່ມີຄວາມສຳຄັນແຖວໜ້າ, ຊຶ່ງມັນໄດ້ຮຽກຮ້ອງການນຳທຸກພາກສ່ວນ, ທຸກຂັ້ນ ມີການຊີ້ນຳ-ນຳພາ ຢ່າງເປັນປົກກະຕິ, ແທດເຖິງ ແລະ ສ້າງເງື່ອນໄຂຄວາມສະດວກດ້ານຕ່າງໆ ຕໍ່ກົງຈັກ ແລະ ວິຊາການທີ່ກ່ຽວຂ້ອງ ແນໃສ່ເຮັດໃຫ້ການສ້າງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ສະໄໝຕໍ່ໄປ ສາມາດສ່ອງແສງໃຫ້ເຫັນເຖິງການສືບຕໍ່ຫັນປ່ຽນແຂງແຮງ, ເຂັ້ມແຂງໃນທຸກດ້ານ.

## II. ເນື້ອໃນການສ້າງແຜນພັດທະນາເສດຖະກິດ-ສັງຄົມຂອງບັນດາຂະແໜງການ, ອົງການ, ແຂວງ, ນະຄອນຫຼວງ ວຽງຈັນ, ນະຄອນ ແລະ ເມືອງ ໄລຍະ 5 ປີຕໍ່ໜ້າ, ໃຫ້ເອົາໃຈໃສ່ ດັ່ງນີ້.

### 1. ການສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງຂະແໜງການ, ອົງການ, ແຂວງ, ນະຄອນຫຼວງວຽງຈັນ, ນະຄອນ ແລະ ເມືອງ 5 ປີຜ່ານມາ.

1.1 ສະເໜີໃຫ້ບັນດາກະຊວງ, ອົງການ, ແຂວງ, ນະຄອນຫຼວງວຽງຈັນ, ນະຄອນ ແລະ ເມືອງ ສະຫຼຸບຕີລາຄາຜົນສຳເລັດການຈັດຕັ້ງປະຕິບັດບັນດາຄາດໝາຍ ແລະ ວຽກງານຈຸດສຸມ ຕາມ 6 ເປົ້າໝາຍ ແລະ 25 ແຜນວຽກຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແລະ ຕາມເປົ້າໝາຍ, ຄາດໝາຍຂອງແຜນພັດທະນາ ຕາມຂະແໜງການ, ອົງການ ແລະ ທ້ອງຖິ່ນຕົນ ວາງອອກ ໃນໄລຍະ 5 ປີຜ່ານມາ ໂດຍໃຫ້ລົງເລິກສະຫຼຸບການປະຕິບັດວຽກງານຈຸດສຸມ, ກິດຈະກຳ ແລະ ໂຄງການຕ່າງໆທີ່ສະໜັບສະໜູນຕໍ່ແຕ່ລະຕົວຊີ້ບອກທີ່ວາງໄວ້, ບົນພື້ນຖານນັ້ນ ຈຶ່ງຕີລາຄາຜົນສຳເລັດຂອງແຕ່ລະຕົວຊີ້ບອກໂດຍທຽບໃສ່ຄາດໝາຍທີ່ໄດ້ກຳນົດໄວ້ໃນແຜນການ 5 ປີ ເພື່ອປະເມີນຜົນສຳເລັດແຕ່ລະຕົວຊີ້ບອກ (ບັນລຸແຜນ ແລະ ບໍ່ບັນລຸແຜນ) ໂດຍຍົກໃຫ້ເຫັນສະພາບພົ້ນເດັ່ນທັງດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ສາເຫດຕ່າງໆລວມທັງບົດຮຽນທີ່ຖອດຖອນໄດ້ມີແນວໃດແດ່?.

ສຳລັບຂະແໜງການໃຫ້ສະຫຼຸບຕີລາຄາ ສະເພາະເປົ້າໝາຍທີ່ຕິດພັນກັບບົດບາດໜ້າທີ່ຂອງຕົນ (ໃນ 6 ເປົ້າໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX 2021-2025); ສຳລັບທ້ອງຖິ່ນ ໃຫ້ສະຫຼຸບຕີລາຄາ ຕາມ 6 ເປົ້າໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໂດຍສົມທຽບໃສ່ຕົວເລກຄາດໝາຍຂອງແຜນການຂອງຕົນທີ່ກຳນົດໄວ້.

1.2 ການສະຫຼຸບຕີລາຄາການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ແມ່ນເນັ້ນໃສ່ການປະເມີນ 5 ວຽກຈຸດສຸມຂອງວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ 6 ວຽກຈຸດສຸມຂອງວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຮອດປີ 2025, ໂດຍຕີລາຄາໃຫ້ເຫັນແຈ້ງດ້ານຜົນສຳເລັດ, ດ້ານອ່ອນ ຂໍ້ຄົງຄ້າງຂອງແຕ່ລະວຽກຈຸດສຸມ ແລະ ບັນດາສາເຫດ-ບົດຮຽນທີ່ຖອດຖອນໄດ້ ຕາມ 3 ຫຼັກການ (ເດັດຂາດ, ໂປ່ງໃສ ແລະ ເປັນມືອາຊີບ) ແລະ ບັນດາຄາດໝາຍທີ່ໄດ້ກຳນົດໄວ້ ຕາມມະຕິຂອງລັດຖະບານ ແລະ ສະພາແຫ່ງຊາດວາງອອກ.

### 2. ທິດທາງຂອງແຜນພັດທະນາຂອງຂະແໜງການ, ອົງການ, ແຂວງ, ນະຄອນຫຼວງວຽງຈັນ, ນະຄອນ ແລະ ເມືອງ 5 ປີຕໍ່ໜ້າ.

ການສ້າງແຜນພັດທະນາເສດຖະກິດ-ສັງຄົມ ຂອງຂະແໜງການ ແລະ ທ້ອງຖິ່ນ (ຂັ້ນແຂວງ, ນະຄອນຫຼວງ, ນະຄອນ ແລະ ຂັ້ນເມືອງ) ຕ້ອງໄດ້ຄຳນຶງເຖິງ ຫຼື ຄາດຄະເນ ປັດໄຈພາຍນອກ ທີ່ເປັນກາລະໂອກາດ ແລະ ສິ່ງທ້າທາຍໃນອະນາຄົດ ສົມທົບກັບການເສີມຂະຫຍາຍຈຸດດີ, ທ່າແຮງຂອງປະເທດ, ຂອງຂະແໜງການ ແລະ ທ້ອງຖິ່ນ ເພື່ອຍາດແຍ່ງກາລະໂອກາດເຂົ້າໃນການພັດທະນາເສດຖະກິດ-ສັງຄົມໃຫ້ເກີດປະໂຫຍດສູງສຸດ, ປະສານສົມທົບຢ່າງກົມກຽວ ແລະ ຮ່ວມມືກັນຢ່າງຈິງຈັງລະຫວ່າງພາກລັດ ແລະ ພາກທຸລະກິດ ເພື່ອແກ້ໄຂບັນຫາຕ່າງໆທີ່ຄົງຄ້າງ ໃນ 5 ປີຜ່ານມາ ເພື່ອສືບຕໍ່ຫັນປ່ຽນໃໝ່ທີ່ຕັ້ງໜ້າເລິກເຊິ່ງໃນການພັດທະນາເສດຖະກິດ-ສັງຄົມ; ເຊີດຊູຈິດໃຈຊາດເອກະລາດເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ບຸກບືນສູ້ຊົນຜ່ານຜ່າທຸກຄວາມຫຍຸ້ງຍາກຕ່າງໆທີ່ຮັບຜົນກະທົບຈາກວິກິດເສດຖະກິດ-ການເງິນຂອງໂລກ ເພື່ອສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ຂະຫຍາຍກຳລັງແຮງສັງລວມພາຍໃນຢ່າງສຸດຂີດ; ລົງເລິກຊອກວິທີທາງເພື່ອປ້ອງກັນ ແລະ ຫຼີກລ້ຽງທີ່ຄາດວ່າຈະໄດ້ຮັບຜົນກະທົບຈາກສິ່ງທ້າທາຍຕ່າງໆທີ່ຈະເກີດຂຶ້ນ, ເກາະຕິດໃສ່ບັນດາທິດທາງ, ເປົ້າໝາຍ ແລະ ວຽກງານບູລິມະສິດຕົ້ນຕໍຂອງປະເທດ ດັ່ງນີ້:

**2.1 ທິດທາງລວມ.**

1) ສືບຕໍ່ຮັບປະກັນໃຫ້ຂະແໜງການ, ອົງການ ແລະ ທ້ອງຖິ່ນຕ່າງໆ ມີຄວາມສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍຢ່າງໜັກແໜ້ນ.

2) ປັບປຸງໂຄງສ້າງເສດຖະກິດໃຫ້ມີຄວາມຫຼາກຫຼາຍ ແລະ ເຂັ້ມແຂງ ຕາມທ່າແຮງບົ່ມຊ້ອນຂອງໂຄງປະກອບຕາມຂະແໜງການ, ເຂດແຄ້ວນ ແລະ ພາກສ່ວນ; ຮັບປະກັນການສ້າງຖານການຜະລິດທີ່ເພິ່ງຕົນເອງໄດ້ໂດຍພື້ນຖານ ແລະ ເສດຖະກິດມະຫາພາກມີຄວາມສະຖຽນລະພາບ ແລະ ໝັ້ນທ່ຽງ.

3) ສືບຕໍ່ພັດທະນາຊັບພະຍາກອນມະນຸດ ໃຫ້ຮັບປະກັນທັງທາງດ້ານປະລິມານ ແລະ ຄຸນນະພາບ ແລະ ສອດຄ່ອງກັບໂຄງປະກອບເສດຖະກິດຕາມຂະແໜງການທີ່ໄດ້ກຳນົດໄວ້, ສາມາດຕອບສະໜອງຕາມຄວາມຕ້ອງການພັດທະນາເສດຖະກິດ-ສັງຄົມ ແລະ ມີຄວາມສາມາດເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ແລະ ສາກົນ.

4) ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ແລະ ຫຼຸດຜ່ອນຄວາມແຕກໂຕນດ້ານການພັດທະນາລະຫວ່າງຕົວເມືອງ ແລະ ຊົນນະບົດ ແລະ ໃນສັງຄົມ.

5) ສືບຕໍ່ປົກປັກຮັກສາຊັບພະຍາກອນທຳມະຊາດ ໄປຕາມທິດ "ຄຸນນະພາບ, ສີຂຽວ ແລະ ຍືນຍົງ" ແລະ ສາມາດຮັບມືກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດຕ່າງໆ.

6) ເພີ່ມທະວີການການປັບປຸງການຄຸ້ມຄອງ ແລະ ບໍລິຫານລັດໃຫ້ມີປະສິດທິພາບ, ທັນສະໄໝ ແລະ ຕາມທິດຫັນເປັນເສດຖະກິດດີຈີຕອນ, ໂປ່ງໃສ ແລະ ວ່ອງໄວ ສາມາດຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມ ໃຫ້ໄດ້ຕາມທິດທີ່ພັກເຮົາໄດ້ກຳນົດໄວ້.

7) ສືບຕໍ່ພົວພັນຮ່ວມມືກັບບັນດາປະເທດເພື່ອນມິດສາກົນ ແລະ ຄູ່ຮ່ວມພັດທະນາ ບົນຫຼັກການຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ; ສືບຕໍ່ພັດທະນາພື້ນຖານໂຄງລ່າງໃຫ້ຮັບປະກັນມາດຖານຄຸນນະພາບສາມາດເຊື່ອມໂຍງ ແລະ ເຊື່ອມຈອດ ຢ່າງເປັນຮູບປະທຳທັງພາຍໃນປະເທດກັບບັນດາປະເທດເພື່ອນບ້ານໃກ້ຄຽງ.

**2.2 ເປົ້າໝາຍຂອງ ແຜນພັດທະນາຂອງຂະແໜງການ, ແຂວງ, ນະຄອນຫຼວງວຽງຈັນ, ນະຄອນ ແລະເມືອງ ໃນໄລຍະ 5 ປີຕໍ່ໜ້າ.**

ອີງໃສ່ຜົນການປະເມີນກາງສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ (2021-2025) ບວກກັບສະພາບແວດລ້ອມພາຍນອກ ແລະ ພາຍໃນ, ທັງອີງໃສ່ຄາດໝາຍຕ່າງໆ ເພື່ອບັນລຸເງື່ອນໄຂ LDCs ໃນປີ 2026, ວິໄສທັດ ຮອດປີ 2030, ເປົ້າໝາຍການເຕີບໂຕສີຂຽວ ແລະ ເປົ້າໝາຍການພັດທະນາແບບຍືນຍົງ (SDGs). ສະນັ້ນ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງຂະແໜງການ ແລະ ທ້ອງຖິ່ນ ຕ້ອງໄດ້ກຳນົດເປົ້າໝາຍເພື່ອສະໜັບສະໜູນເປົ້າໝາຍຂອງແຜນແຫ່ງຊາດ ຄື:

1) ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄວາມເຂັ້ມແຂງ ແລະ ມີຄວາມໝັ້ນທ່ຽງ,
2) ຊັບພະຍາກອນມະນຸດມີຄຸນນະພາບ ແລະ ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ,
3) ຊີວິດການເປັນຢູ່ໄດ້ຮັບການຮັບປຸງດີຂຶ້ນ, ສັງຄົມທີ່ໜ້າຢູ່ ແລະ ສີວິໄລ,
4) ການຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃຫ້ມີຄວາມຍືນຍົງ ແລະ ສາມາດຮັບມືກັບການປ່ຽນແປງສະພາບອາກາດ ແລະ ໄພພິບັດຕ່າງໆ,
5) ການຄຸ້ມຄອງ ແລະ ບໍລິຫານລັດທີ່ມີປະສິດທິພາບ, ການເມືອງມີສະຖຽນລະພາບ ແລະ ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ,
6) ການເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ແລະ ສາກົນຢ່າງກວ້າງຂວາງ ແລະ ມີປະສິດທິຜົນ.

**2.3 ວຽກງານບູລິມະສິດຂອງຂະແໜງການ ແລະ ທ້ອງຖິ່ນ (ຂັ້ນແຂວງ, ນະຄອນຫຼວງ, ນະຄອນ ແລະ ເມືອງ).**

ວຽກງານບູລິມະສິດຂອງແຜນພັດທະນາຂະແໜງການ ແລະ ທ້ອງຖິ່ນ ຕ້ອງສອດຄ່ອງ ແລະ ສະໜັບສະໜູນເປົ້າໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄືດັ່ງນີ້:

**ເປົ້າໝາຍທີ ໜຶ່ງ: ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄວາມເຂັ້ມແຂງ ແລະ ມີຄວາມໝັ້ນທ່ຽງ.** ເພື່ອບັນລຸເປົ້າ ໝາຍທີ 1 ຕ້ອງສຸມໃສ່ວຽກງານບູລິມະສິດດັ່ງນີ້:

(1) ຊຸກຍູ້ການເຕີບໂຕເສດຖະກິດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ເຂັ້ມແຂງ ດ້ວຍການຫັນປ່ຽນໂຄງປະກອບເສດຖະກິດໃຫ້ມີຄວາມຫຼາກຫຼາຍ ແລະ ສ້າງມູນຄ່າເພີ່ມຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ; ຊຸກຍູ້ການຜະລິດພາຍໃນເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ ຕາມທ່າແຮງບົ່ມຊ້ອນ ໃນນີ້ ເລັ່ງໃສ່ການຜະລິດເພື່ອການຄ້ຳປະກັນດ້ານສະບຽງອາຫານ, ການປຸງແຕ່ງກະສິກຳ, ອຸດສາຫະກຳທີ່ເປັນຕ່ອງໂສ້ການຜະລິດຂອງສາກົນ ແລະ ພາກພື້ນ, ສົ່ງເສີມການທ່ອງທ່ຽວ.

(2) ປັບປຸງເສດຖະກິດມະຫາພາກມີຄວາມໝັ້ນທ່ຽງ ໂດຍສະເພາະ ການແກ້ໄຂອັດຕາເງິນເຟີ້, ອັດຕາແລກປ່ຽນ, ການສ້າງລາຍຮັບງົບປະມານ ແລະ ແກ້ໄຂໜີ້ສິນສາທາລະນະ.

(3) ສົ່ງເສີມ ແລະ ພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ຂະຫຍາຍຕົວມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ; ສ້າງເງື່ອນໄຂໃຫ້ເຂົາເຈົ້າເຂົ້າເຖິງແຫຼ່ງທຶນ ເພື່ອສ້າງຄວາມເຂັ້ມແຂງຂຶ້ນເລື້ອຍໆ.

(4) ພັດທະນາວິສາຫະກິດລັດ ໃຫ້ມີປະສິດທິຜົນ.

(5) ພັດທະນາເສດຖະກິດດີຈີຕອນ ເພື່ອຮອງຮັບການພັດທະນາເສດຖະກິດ-ສັງຄົມ ໃນຍຸກ 4.0.

(6) ສົ່ງເສີມເສດຖະກິດໝູນວຽນ (Circular Economy) ຕາມຍຸດທະສາດການເຕີບໂຕສີຂຽວກຳນົດໄວ້ໃຫ້ເປັນຮູບປະທຳຫຼາຍຂຶ້ນ.

**ເປົ້າໝາຍທີ ສອງ: ຊັບພະຍາກອນມະນຸດມີຄຸນນະພາບ ແລະ ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ**. ເພື່ອບັນລຸເປົ້າໝາຍທີ 2 ຕ້ອງສຸມໃສ່ວຽກງານບູລິມະສິດດັ່ງນີ້:

1) ພັດທະນາການສຶກສາໃຫ້ມີຄຸນນະພາບ ໂດຍປັບປຸງການຮຽນ, ການສອນ, ສະໜອງອຸປະກອນ ແລະ ພື້ນຖານໂຄງລ່າງສະຖານການສຶກສາເທົ່າທີ່ສາມາດປະຕິບັດໄດ້.

2) ປັບປຸງຄຸນນະພາບວຽກງານສາທາລະນະສຸກ, ການບໍລິການດ້ານສາທາລະນະສຸກ, ວຽກງານໂພຊະນາການ.

3) ສຸມໃສ່ພັດທະນາແຮງງານ ແລະ ການສ້າງວຽກເຮັດງານທຳໃຫ້ຮັບປະກັນທັງດ້ານປະລິມານ ແລະ ຄຸນນະພາບ ໂດຍການສົ່ງເສີມການຝຶກວິຊາຊີບ, ສ້າງມາດຖານດ້ານວິຊາຊີບ, ປັບປຸງຂໍ້ມູນດ້ານແຮງງານ; ສ້າງຕະຫຼາດແຮງງານເພື່ອສາມາດສະໜອງຄວາມຕ້ອງການທັງພາຍໃນ ແລະ ຕ່າງປະເທດ.

4) ພັດທະນາບຸກຄະລະກອນທັງຂອງພາກລັດ ແລະ ພາກເອກະຊົນ ໃຫ້ມີຄວາມຮູ້ ແລະ ຄວາມສາມາດນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ເພື່ອປະກອບສ່ວນພັດທະນາປະເທດຢ່າງມີປະສິດທິພາບ.

5) ສົ່ງເສີມການຄົ້ນຄວ້າ ແລະ ນຳໃຊ້ວິທະຍາສາດ, ນະວັດຕະກຳໃໝ່ ແລະ ພູມປັນຍາ ເພື່ອຍົກສູງປະສິດທິພາບການຜະລິດ.

**ເປົ້າໝາຍທີ ສາມ: ຊີວິດການເປັນຢູ່ໄດ້ຮັບການຮັບປຸງດີຂຶ້ນ, ສັງຄົມທີ່ໜ້າຢູ່ ແລະ ສີວິໄລ**. ເພື່ອບັນລຸເປົ້າໝາຍທີ 3 ຕ້ອງສຸມໃສ່ວຽກງານບູລິມະສິດດັ່ງນີ້:

1) ປັບປຸງ ແລະ ສ້າງໂຄງລ່າງພື້ນຖານທີ່ຈຳເປັນ ເພື່ອອຳນວຍຄວາມສະດວກໃຫ້ແກ່ການພັດທະນາ ຢ່າງມີຈຸດສຸມ ໂດຍນຳໃຊ້ທຸກແຫຼ່ງທຶນທີ່ມີ.

2) ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕາມເຂດຈຸດສຸມພັດທະນາຕ່າງໆ ຕາມມາດຖານເງື່ອນໄຂທີ່ໄດ້ກຳນົດ.

3) ປັບປຸງ ແລະ ຂະຫຍາຍລະບົບປົກປ້ອງທາງສັງຄົມ ໃຫ້ມີປະສິດທິຜົນດີຂຶ້ນ.

4) ປັບປຸງ ແລະ ຂະຫຍາຍລະບົບປະກັນສັງຄົມໃຫ້ກວ້າງຂວາງ ແລະ ມີຄຸນນະພາບ ໂດຍເອົາໃຈໃສ່ວຽກງານສະຫວັດດີການສັງຄົມ, ປະຕິບັດນະໂຍບາຍໃຫ້ແກ່ຜູ້ທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ

5) ພັດທະນາຕົວເມືອງໃຫ້ມີຄວາມສະຫງົບ, ສະອາດ ແລະ ສີຂຽວ.

6) ພັດທະນາແມ່ຍິງ, ໄວໜຸ່ມ ແລະ ເດັກ ຕາມແຜນງານ ແລະ ໂຄງການ.

7) ສົ່ງເສີມວັດທະນະທຳ ແລະ ສັງຄົມທີ່ສີວິໄລ.

**ເປົ້າໝາຍທີ ສີ່: ການຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃຫ້ມີຄວາມຍືນຍົງ ແລະ ສາມາດຮັບມືກັບການປ່ຽນແປງສະພາບອາກາດ ແລະ ໄພພິບັດຕ່າງໆ**. ເພື່ອບັນລຸເປົ້າໝາຍທີ 4 ຕ້ອງສຸມໃສ່ວຽກງານບູລິມະສິດດັ່ງນີ້:

(1) ສຸມໃສ່ປົກປັກຮັກສາ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດປ່າໄມ້, ທີ່ດິນ, ນ້ຳ ແລະ ແຮ່ທາດໃຫ້ເກີດຜົນປະໂຫຍດສູງສຸດ, ຫຼຸດຜ່ອນການສົ່ງອອກວັດຖຸດິບ, ເອົາໃຈໃສ່ການປຸງແຕ່ງຢູ່ພາຍໃນປະເທດ.

(2) ເອົາໃຈໃສ່ຄຸ້ມຄອງສິ່ງແວດລ້ອມທາງນ້ຳ, ທາງອາກາດ, ເຂັ້ມງວດການປະເມີນຜົນກະທົບທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ຈາກໂຄງການພັດທະນາຕ່າງໆ.

(3) ສືບຕໍ່ຈັດຕັ້ງປະຕິບັດວຽກງານການປັບຕົວຕໍ່ການປ່ຽນແປງດິນຟ້າອາກາດ, ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ, ໂຄງການຊື້-ຂາຍກາກບອນ, ສົ່ງເສີມການເຂົ້າເຖິງແຫຼ່ງທຶນສິ່ງແວດລ້ອມ ແລະ ກອງທຶນສີຂຽວ ແລະ ອື່ນໆ.

(4) ສ້າງຄວາມເຂັ້ມແຂງ ແລະ ຄຸ້ມຄອງຄວາມສ່ຽງໄພພິບັດທາງທຳມະຊາດ, ສ້າງກອງທຶນໄພພິບັດ, ປັບປຸງລະບົບເຕືອນໄພລ່ວງໜ້າ, ການຟື້ນຟູຫຼັງໄພພິບັດ.

(5) ສົ່ງເສີມວຽກງານການເຕີບໂຕສີຂຽວ ໃນ 7 ຂະແໜງການຕົ້ນຕໍ ຂອງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຄື ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ຂະແໜງກະສິກຳ ແລະ ປ່າໄມ້; ຂະແໜງອຸດສາຫະກຳ ແລະ ການຄ້າ; ຂະແໜງໂຍທາທິການ ແລະ ຂົນສົ່ງ; ຂະແໜງພະລັງງານ ແລະ ບໍ່ແຮ່ (ສົ່ງເສີມນຳໃຊ້ລົດໄຟຟ້າ (EV), ການນຳໃຊ້ພະລັງງານຊີວະພາບ); ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງວິທະຍາສາດ ແລະ ເຕັກໂນໂລຊີ.

**ເປົ້າໝາຍທີ ຫ້າ: ການຄຸ້ມຄອງ ແລະ ບໍລິຫານລັດທີ່ມີປະສິດທິພາບ, ການເມືອງມີສະຖຽນລະພາບ ແລະ ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ.** ເພື່ອບັນລຸເປົ້າໝາຍທີ 6 ຕ້ອງສຸມໃສ່ວຽກງານບຸລິມະສິດດັ່ງນີ້:

(1) ປັບປຸງ ແລະ ສ້າງກົດໝາຍ, ນິຕິກຳ, ລະບຽບການ ແລະ ກົນໄກການປະສານງານຂອງອົງການຄຸ້ມຄອງ-ການບໍລິຫານລັດ ໃຫ້ມີຄວາມສອດຄ່ອງ, ກົມກຽວ ແລະ ຮັບປະກັນການເຂົ້າເຖິງຂອງປະຊາຊົນ.

(2) ປັບປຸງການຄຸ້ມຄອງ ແລະ ບໍລິຫານລັດໃຫ້ມີຄວາມທັນສະໄໝ, ສະດວກ ແລະ ວ່ອງໄວ; ສ້າງຄວາມອາດສາມາດໃຫ້ພະນັກງານລັດຖະກອນໃຫ້ເປັນມືອາຊີບ.

(3) ເພີ່ມທະວີການໂຄສະນາ, ເຜີຍແຜ່ນິຕິກຳ ແນໃສ່ຍົກສູງ ແລະ ສ້າງສະຕິເຄົາລົບກົດໝາຍ ແລະ ປະຕິບັດກົດໝາຍ; ຫັນເອົາບັນດາກົດໝາຍ, ລະບຽບການ ເຂົ້າສູ່ການຈັດຕັ້ງປະຕິບັດຕົວຈິງ ຢ່າງເຂັ້ມງວດ ແລະ ເດັດຂາດ.

(4) ສຸມໃສ່ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆຂອງສັງຄົມ ໃຫ້ຫຼຸດລົງ ດ້ວຍວິທີການປະຕິບັດກົດໝາຍຢ່າງເຂັ້ມງວດ.

**ເປົ້າໝາຍທີ ຫົກ: ການເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນພາກ ແລະ ສາກົນຢ່າງກວ້າງຂວາງ ແລະ ມີປະສິດທິຜົນ,** ເພື່ອບັນລຸເປົ້າໝາຍທີ 6 ຕ້ອງສຸມໃສ່ວຽກງານບຸລິມະສິດດັ່ງນີ້:

(1) ສືບຕໍ່ສົ່ງເສີມການເຊື່ອມໂຍງການຄ້າ, ການລົງທຶນ ແລະ ການບໍລິການກັບພາກພື້ນ ແລະ ສາກົນ ດ້ວຍການປັບປຸງກົນໄກ ແລະ ລະບຽບການ; ສ້າງຄວາມສະດວກໃຫ້ແກ່ການລົງທຶນ ແລະ ດຳເນີນທຸລະກິດ ຢູ່ ສປປ ລາວ ໃຫ້ດີຂຶ້ນກວ່າເກົ່າ.

(2) ການພັດທະນາເຂດແຄວ້ນ ໂດຍເລັ່ງໃສ່ການສ້າງຖານການຜະລິດ ແລະ ການບໍລິການຕາມທ່າແຮງບົ່ມຊ້ອນ ແລະ ຈຸດພິເສດທາງດ້ານທີ່ຕັ້ງພູມສັນຖານຂອງແຕ່ລະເຂດແຄ້ວນ ແລະ ທ້ອງຖິ່ນ, ບັນດາແຂວງຕ່າງໆຕ້ອງໄດ້ຄົ້ນຄ້ວາສ້າງໂຄງລ່າງພື້ນຖານດ້ານຕ່າງໆຂອງທ້ອງຖິ່ນຕົນ ແລະ ລະຫວ່າງທ້ອງຖິ່ນດ້ວຍກັນທີ່ສາມາດຮ່ວມກັນໄດ້ ເປັນຕົ້ນ ໂຮງຮຽນ, ໂຮງໝໍ, ສະໜາມກິລາ ແລະ ອື່ນໆ.

(3) ການພັດທະນາແລວທາງເສດຖະກິດຕ່າງໆ (ແລວທາງເສດຖະກິດລາວ-ຈີນ, ແລວທາງເສດຖະກິດຕາເວັນອອກ-ຕາເວັນຕົກ, ແລວທາງເໜືອ-ໃຕ້) ໂດຍສຸມໃສ່ພັດທະນາເສດຖະກິດ ແລະ ກໍ່ສ້າງພື້ນຖານໂຄງລ່າງຕາມແລວເສດຖະກິດດັ່ງກ່າວ; ປັບປຸງທາງຫຼວງແຫ່ງຊາດ ແລະ ເສັ້ນທາງລຽບຕາມເສັ້ນທາງລົດໄຟລາວ-ຈີນ.

(4) ສືບຕໍ່ພົວພັນຮ່ວມມືປະເທດເພື່ອນມິດສາກົນ ແລະ ຄູ່ຮ່ວມພັດທະນາ ໃຫ້ມີປະສິດທິຜົນ ຕາມແຜນງານ, ໂຄງການຕ່າງໆ ເພື່ອສະໜັບສະໜູນເປົ້າໝາຍການພັດທະນາເສດຖະກິດ-ສັງຄົມ.

3. **ວິທີການສ້າງແຜນພັດທະນາເສດຖະກິດ-ສັງຄົມ ຂອງຂະແໜງການ, ແຂວງ,ນະຄອນຫຼວງວຽງຈັນ, ນະຄອນ ແລະ ເມືອງ.**

- ສະເໜີບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ຄົ້ນຄ້ວາຜັນຂະຫຍາຍທິດທາງ, ເປົ້າໝາຍ ແລະ ວຽກງານບຸລິມະສິດຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X(2026-2030) ທີ່ຕິດພັນຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຂະແໜງການຕົນ ຕາມກຳນົດໃນຂໍ້ທີ 2 ຂ້າງເທິງ ເພື່ອສ້າງເປັນແຜນພັດທະນາໃນໄລຍະ 5 ປີ ຕໍ່ໜ້າຂອງຕົນ, ເຊິ່ງວຽກງານບຸລິມະສິດໃນແຜນຂອງຕົນນັ້ນ ຕ້ອງຮັບປະກັນໃຫ້ມີຄວາມສອດຄ່ອງກົມກຽວກັບແຜນລະດັບຊາດ.

- ສະເໜີໃຫ້ບັນດາແຂວງ/ນະຄອນຫຼວງວຽງຈັນ, ນະຄອນ ແລະ ເມືອງ ຄົ້ນຄ້ວາຜັນຂະຫຍາຍທິດທາງ, ເປົ້າໝາຍ ແລະ ວຽກງານບຸລິມະສິດທີ່ໄດ້ກຳນົດໃນຂໍ້ທີ 2 ຂ້າງເທິງ ເຂົ້າໃນການສ້າງແຜນພັດທະນາເສດຖະກິດ-ສັງຄົມຂອງຕົນ, ເຊິ່ງການຄົ້ນຄວ້າແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ເມືອງນັ້ນ ຕ້ອງຢູ່ບົນພື້ນຖານທ່າແຮງ, ຈຸດພິເສດ, ວຽກງານຈຳເປັນຂອງແຕ່ລະປ່ອນ ໂດຍຕ້ອງຮັບປະກັນໃຫ້ສະໜັບສະໜູນທິດທາງ ແລະ ເປົ້າໝາຍຂອງແຜນລະດັບຊາດ (ໝາຍຄວາມວ່າ ແຜນຂອງແຕ່ລະແຂວງ ແລະ ເມືອງ ອາດມີ 6 ເປົ້າໝາຍ, ຫຼາຍກວ່າ 6 ເປົ້າໝາຍ ຫຼື ໜ້ອຍກວ່າ 6 ເປົ້າໝາຍຂອງແຜນການ 5 ປີ ຄັ້ງທີ X ຂຶ້ນກັບສະພາບເງື່ອນໄຂເປັນຈິງຂອງແຕ່ລະທ້ອງຖິ່ນ).

**III. ໂຄງຮ່າງຂອງແຜນພັດທະນາຂອງຂະແໜງການ, ຂອງແຂວງ/ນະຄອນຫຼວງວຽງຈັນ ແລະ ເມືອງ ໄລຍະ 5 ປີຕໍ່ໜ້າ.**

ໂຄງຮ່າງຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ແມ່ນຈະສ້າງໄປຕາມ 6 ເປົ້າໝາຍ, ສະນັ້ນ ໂຄງຮ່າງຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີຕໍ່ໜ້າ ຂັ້ນແຂວງ ແລະ ເມືອງ ແມ່ນໃຫ້ແມ່ນສ້າງໄປຕາມ 6 ເປົ້າໝາຍຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X, ສຳລັບໂຄງຮ່າງແຜນພັດທະນາເສດຖະກິດ-ສັງຄົມຂັ້ນບ້ານມີຄຳແນະນຳສະເພາະ. ໂຄງຮ່າງຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ປະກອບດ້ວຍ 3 ພາກ ຄືດັ່ງນີ້:

**ພາກທີ 1: ການສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ (2021-2025).**

1. ສະພາບການລວມ.
   - ສະພາບແວດລ້ອມທັງພາຍນອກ ແລະ ພາຍໃນ.
2. ຜົນສຳເລັດການຈັດຕັ້ງປະຕິບັດຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ (2021-2025).
   (ການສະຫຼຸບຕີລາຄາແຜນການ 5 ປີ ຄັ້ງທີ IX ໃຫ້ໄປຕາມ 6 ເປົ້າໝາຍ ແລະ 25 ແຜນວຽກຈຸດສຸມ ສ່ວນການສະຫຼຸບຕີລາຄາຂອງບັນດາຂະແໜງການ ແລະ ທ້ອງຖິ່ນ ໃຫ້ສະຫຼຸບຕາມແຜນວຽກຈຸດສຸມ ແລະ ຄາດໝາຍທີ່ກຳນົດໄວ້ໃນແຜນພັດທະນາ ຂອງຂະແໜງການ ແລະ ທ້ອງຖິ່ນ; ສຳລັບການສະຫຼຸບການຈັດຕັ້ງປະຕິບັດບັນດາວຽກຈຸດສຸມ ແລະ ຄາດໝາຍຂອງ 2 ວາລະແຫ່ງຊາດ ແມ່ນໃຫ້ສະຫຼຸບເປັນຫົວຂໍ້ສະເພາະເຂົ້າໃນແຕ່ລະເປົ້າໝາຍທີ່ຕິດພັນກັບວາລະແຫ່ງຊາດ).
3. ຕີລາຄາລວມ.
   - ຜົນສຳເລັດທີ່ພົ້ນເດັ່ນແຕ່ລະດ້ານ.
   - ສາເຫດທີ່ພາໃຫ້ມີຜົນສຳເລັດ.
   - ຂໍ້ຄົງຄ້າງ ແລະ ສິ່ງທ້າທາຍ.
   - ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ.
   - ບົດຮຽນທີ່ຖອດຖອນໄດ້.

**ພາກທີ 2: ທິດທາງແຜນການ 5 ປີຕໍ່ໜ້າ.**

1. ທິດທາງລວມ
2. ເປົ້າໝາຍ
3. ແຜນວຽກງານຈຸດສຸມ

**3.1 ເປົ້າໝາຍທີ**

**1** ..........................................................................................

- ແຜນວຽກຈຸດສຸມ 1 (ໃນແຕ່ລະວຽກຈຸດສຸມຕ້ອງໄດ້ກຳນົດຄາດໝາຍ, ຕົວຊີ້ບອກ ແລະ ວຽກຈຸດສຸມ)
- ແຜນວຽກຈຸດສຸມ 2
- ....

**3.2 ເປົ້າໝາຍທີ**

**2 ............................................................................................................**

- ແຜນວຽກຈຸດສຸມ 1 (ໃນແຕ່ລະວຽກຈຸດສຸມຕ້ອງໄດ້ກຳນົດຄາດໝາຍ, ຕົວຊີ້ບອກ ແລະ ວຽກຈຸດສຸມ)
- ແຜນວຽກຈຸດສຸມ 2
- ....

**3.3 ເປົ້າໝາຍທີ**

**3 ............................................................................................................**

- ແຜນວຽກຈຸດສຸມ 1 (ໃນແຕ່ລະວຽກຈຸດສຸມຕ້ອງໄດ້ກຳນົດຄາດໝາຍ, ຕົວຊີ້ບອກ ແລະ ວຽກຈຸດສຸມ)
- ແຜນວຽກຈຸດສຸມ 2
- ....

**3.4 ເປົ້າໝາຍທີ**

**4 ............................................................................................................**

- ແຜນວຽກຈຸດສຸມ 1 (ໃນແຕ່ລະວຽກຈຸດສຸມຕ້ອງໄດ້ກຳນົດຄາດໝາຍ, ຕົວຊີ້ບອກ ແລະ ວຽກຈຸດສຸມ)
- ແຜນວຽກຈຸດສຸມ 2
- ....

**3.5 ເປົ້າໝາຍທີ**

**5 ............................................................................................................**

- ແຜນວຽກຈຸດສຸມ 1 (ໃນແຕ່ລະວຽກຈຸດສຸມຕ້ອງໄດ້ກຳນົດຄາດໝາຍ, ຕົວຊີ້ບອກ ແລະ ວຽກຈຸດສຸມ)
- ແຜນວຽກຈຸດສຸມ 2
- ....

**3.6 ເປົ້າໝາຍທີ**

**6 ............................................................................................................**

- ແຜນວຽກຈຸດສຸມ 1 (ໃນແຕ່ລະວຽກຈຸດສຸມຕ້ອງໄດ້ກຳນົດຄາດໝາຍ, ຕົວຊີ້ບອກ ແລະ ວຽກຈຸດສຸມ)
- ແຜນວຽກຈຸດສຸມ 2
- ....

## ພາກທີ 3: ມາດຕະການຈັດຕັ້ງປະຕິບັດແຜນພັດທະນາຂອງຂະແໜງການ, ອົງການ ແລະ ທ້ອງຖິ່ນ 5 ປີຕໍ່ໜ້າ.

ເພື່ອຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຕໍ່ໜ້າຂອງແຕ່ລະພາກສ່ວນ, ແຕ່ລະຂັ້ນໃຫ້ເປັນຮູບປະທຳຕົວຈິງຕ້ອງມີມາດຕະການອັນລະອຽດທີ່ຖືກຕ້ອງ, ສອດຄ່ອງກັບສະພາບຈຸດພິເສດ, ພາລະບົດບາດໜ້າທີ່ຂອງພາກສ່ວນຕົນ. ສິ່ງສຳຄັນແມ່ນການສ້າງຄວາມຮັບຮູ້ເຂົ້າໃຈໃຫ້ແກ່ການຈັດຕັ້ງ ແລະ ບຸກຄົນທີ່ເປັນເອກະພາບ ແລະ ສາມາດເຂົ້າຮ່ວມຢ່າງພ້ອມພຽງດ້ວຍຮູບການວິທການຕ່າງໆ; ການມອບໝາຍສິດ ແລະ ຄວາມຮັບຜິດຊອບທີ່ຈະແຈ້ງ; ການສ້າງກຸ່ມງານ, ກຸ່ມການຜະລິດ ຕິດພັນກັບການສ້າງບຸກຄະລະກອນທີ່ເຂັ້ມແຂງ; ການນຳໃຊ້ຄວາມກ້າວໜ້າວິທະຍາສາດເຕັກນິກ, ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນໜ້າທີ່ການເມືອງທີ່ທົ່ວເຖິງ; ການປະສານສົມທົບ ລະຫວ່າງຂັ້ນ

ແລະ ຂະແໜງການທີ່ແໜ້ນແຟ້ນ, ກົມກຽວກັນຢ່າງເປັນປົກກະຕິ; ການຕິດຕາມ, ກວດກາ, ປະເມີນ, ຊຸກຍູ້, ສະຫຼຸບຕີລາຄາ, ປະຕິບັດນະໂຍບາຍຕ່າງໆຕໍ່ກົມກອງ-ທຸກຄົນທີ່ມີຜົນງານດີເດັ່ນ, ລາຍງານຂັ້ນເທິງ ແລະ ອື່ນໆ.

**IV. ມາດຕະການໃນການສ້າງແຜນພັດທະນາເສດຖະກິດ-ສັງຄົມຂອງຂະແໜງການ, ແຂວງ, ນະຄອນຫຼວງວຽງຈັນ ແລະ ເມືອງ.**

1) ການນໍາກະຊວງ, ອົງການ, ນະຄອນຫຼວງວຽງຈັນ, ແຂວງ ຄົ້ນຄ້ວາຜັນຂະຫຍາຍຕາມສະພາບ, ຈຸດພິເສດຂອງຂະແໜງການ ແລະ ທ້ອງຖິ່ນຕົນ, ທັງນໍາພາ-ຊີ້ນໍາກົງຈັກຊ່ວຍວຽກຂັ້ນຕົນ ແລະ ແຕ່ງຕັ້ງຄະນະຮັບຜິດຊອບ, ລົງຊ່ວຍຂັ້ນທ້ອງຖິ່ນ, ຊຶ່ງເປັນອົງກອນຂັ້ນລຸ່ມຖັດຕົນ ໃນການສະຫຼຸບຕີລາຄາ ແລະ ສ້າງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ໂດຍຕິດພັນກັບການຮ່າງລາຍງານການເມືອງຂອງອົງຄະນະພັກຂັ້ນຕົນ.

2) ດໍາເນີນເກັບກໍາຂໍ້ມູນຕ່າງໆຮອບດ້ານທີ່ພົວພັນເຖິງເສດຖະກິດ-ສັງຄົມ ເພື່ອຮັບໃຊ້ແກ່ການສະຫຼຸບຕີລາຄາ ແລະ ການສ້າງແຜນພັດທະນາຂອງກະຊວງ, ອົງການ, ນະຄອນຫຼວງວຽງຈັນ, ແຂວງ, ນະຄອນ ແລະ ເມືອງ.

3) ຈັດກອງປະຊຸມປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງຕ່າງໆ, ລວມທັງສະພາການຄ້າ ແລະ ອຸດສາຫະກໍາ, ນັກທຸລະກິດ ເພື່ອລະດົມຄວາມຄິດເຫັນໃຫ້ກວ້າງຂວາງ ຕໍ່ກັບການສະຫຼຸບຕີລາຄາ, ການກໍານົດທິດທາງ, ຄາດໝາຍວຽກງານບູລິມະສິດການພັດທະນາຂອງຂະແໜງການ, ອົງການ ແລະ ທ້ອງຖິ່ນຕົນ.

4) ມີການຕິດຕາມ, ກວດກາ, ຊຸກຍູ້ ແລະ ລາຍງານການປະຕິບັດວຽກຕໍ່ຂັ້ນເທິງກ່ຽວຂ້ອງຖັດຕົນເປັນແຕ່ລະໄລຍະ.

5) ພາຍຫຼັງສໍາເລັດຜ່ານໃນກອງປະຊຸມໃຫຍ່ອົງຄະນະພັກຂັ້ນຕົນແລ້ວ, ກວດກາຮຽບຮຽງຄືນແລ້ວ ນໍາສົ່ງໃຫ້ອະນຸກໍາມະການເນື້ອໃນຂັ້ນເທິງຖັດຕົນທັນກັບເວລາ.

**ລັດຖະມົນຕີ**

ຄໍາເຈນ ວົງໂພສີ

**<u>ບ່ອນສົ່ງ:</u>**

1) ຄະນະຮັບຜິດຊອບເນື້ອໃນກອງປະຊຸມໃຫຍ່ ຄັ້ງທີ XII ເພື່ອຕາງລາຍງານ.
2) ໜ່ວຍງານຮັບຜິດຊອບ ແລະ ພັດທະນາເສດຖະກິດ-ສັງຄົມ ທ່ານລະ 1 ສະບັບ.
3) ສໍາເນົາ 3 ສະບັບ.